ASEAN AUSTRALIA SMART CITIES TRUST FUND
Asian Development Bank

Australian Government
Department of Foreign Affairs and Trade

ADB

ຄູ່ຮ່ວມຈັດຕັ້ງປະຕິບັດ:
RAMBOLL



# ນະຄອນຫຼວງພະບາງ

## ສະໜັບສະໜູນຄວາມປາດຖະໜາຂອງນະຄອນຫຼວງພະບາງໃນການເປັນເມືອງມໍລະດົກທີ່ໜ້າຢູ່ຂຶ້ນສຳລັບທຸກຄົນ

ຮູບພາບໂດຍ: Adobe Stock.

**ນະຄອນຫຼວງພະບາງ, ເປັນສະຖານທີ່ຕັ້ງຂອງແຫຼ່ງມໍລະດົກໂລກແຫ່ງທຳອິດໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຍັງເປັນສະຖານທີ່ແຫຼ່ງທ່ອງທ່ຽວແຫ່ງໜຶ່ງທີ່ມີຊື່ສຽງ, ດ້ວຍຄວາມພະຍາຍາມທີ່ຈະບັນລຸຕາມແນວທາງການເຕີບໃຫຍ່ຂະຫຍາຍຕົວຂອງຕົວເມືອງແບບຍືນຍົງໃນໄລຍະຍາວ ໂດຍການປົກປ້ອງແຫຼ່ງມູນມໍລະດົກພູມປັນຍາທາງດ້ານວັດທະນະທຳທີ່ໄດ້ສ້າງຂຶ້ນ, ເປັນທຳມະຊາດ ແລະ ຈັບຕ້ອງບໍ່ໄດ້. ຍຸດທະສາດການສ້າງນະຄອນຫຼວງພະບາງໃຫ້ກາຍເປັນຕົວເມືອງອັດສະລິຍະ ແລະ ມີຄວາມປະສົມປະສານ ໄດ້ນະຄອນຫຼວງພະບາງວາງຍຸດທະສາດສະເພາະ ແລະ ໂຄງການຕົວເມືອງອັດສະລິຍະທີ່ຄຳນຶງເຖິງຄວາມປາດຖະໜາດັ່ງກ່າວນີ້ ແລະ ສ້າງເປັນເມືອງມໍລະດົກທີ່ໜ້າຢູ່ຍິ່ງຂຶ້ນສຳລັບທຸກຄົນ.**

## ສະພາບການ ແລະ ບັນຫາດ້ານຍຸດທະສາດ

ມໍລະດົກຂອງຫຼວງພະບາງປະສົມປະສານກັບວັດທະນະທຳ ແລະ ຮີດຄອງປະເພນີແບບຊາວພຸດໃນທ້ອງຖິ່ນທີ່ມີຄວາມໂດດເດັ່ນດ້ວຍການປະສົມປະສານລະຫວ່າງ ສະຖາປັດຕະຍະກຳແບບທ້ອງຖິ່ນ, ຊາວພຸດ ແລະ ຝຣັ່ງເສດໃນຍຸກອານານິຄົມທີ່ເປັນເອກະລັກທີ່ຕັ້ງຢູ່ໃນພູມມິປະເທດຕາມແຄມແມ່ນ້ຳເຂດຮ້ອນ. ນັບຕັ້ງແຕ່ນະ ຄອນຫຼວງພະບາງລວມຢູ່ໃນລາຍຊື່ມໍລະດົກໂລກໃນປີ 1995, ການທ່ອງທ່ຽວ ແລະ ການຂະຫຍາຍຕົວຂອງຈຳນວນປະຊາກອນໄດ້ກະຕຸ້ນໃຫ້ເກີດການຂະຫຍາຍ ຕົວຂອງຕົວເມືອງອອກໄປຊານເມືອງ ແລະ ໂອກາດທາງດ້ານເສດຖະກິດໃໝ່ໆ. ນອກຈາກນີ້ ການຈະເລີນເຕີບໂຕ ຍັງໄດ້ນຳມາເຊິ່ງຄວາມທ້າທາຍໃນຕົວເມືອງ ເຊັ່ນ ການຈໍລະຈອນຕິດຂັດ, ການຖິ້ມຂີ້ເຫຍື້ອ, ສະຖານທີ່ທ່ອງທ່ຽວທີ່ແອອັດ ແລະ ການສູນເສຍເຂດພື້ນທີ່ຊຸ່ມນ້ຳ, ຊຶ່ງທັງໝົດນີ້ແມ່ນສິ່ງຜົນຕໍ່ຊີວິດການເປັນຢູ່ ແລະ ມູນມໍລະດົກຂອງນະຄອນ. ເນື່ອງຈາກ ຈຳນວນປະຊາກອນ ແລະ ນັກທ່ອງທ່ຽວທີ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ສິ່ງທ້າທາຍເຫຼົ່ານີ້ອາດຈະຮ້າຍແຮງກ່ວາເກົ່າ, ໂດຍຮຸນແຮງຂຶ້ນຈາກບັນຫາທາງດ້ານໂຄງສ້າງ ເຊັ່ນວ່າ: ການຂາດແຄນເງິນທຶນ, ການຕັດສິນໃຈແບບກະຈັດກະຈາຍ ແລະ ການປະສານງານທີ່ອ່ອນແອລະຫວ່າງ ບັນດາໜ່ວຍງານບໍລິຫານຈັດການຕົວເມືອງ.

## ການພັດທະນາຍຸດທະສາດຕົວເມືອງອັດສະລິຍະ ແລະ ປະສົມປະສານ

ຫ້ອງວ່າການປົກຄອງນະຄອນຫຼວງພະບາງ ເປັນເຈົ້າການໃນການກະກຽມຍຸດທະສາດ ຕາມຂະບວນການແບບສາມຂັ້ນຕອນ, ໂດຍໄດ້ຮັບການສະໜັບສະໜູນຈາກ ກອງທຶນຊ່ວຍເຫຼືອການພັດທະນາຕົວເມືອງອັດສະລິຍະອາຊຽນ-ອົດສະຕາລີ ຊຶ່ງໄດ້ຮັບເງິນທຶນຊ່ວຍເຫຼືອຈາກລັດຖະບານປະເທດອົດສະຕາລີ ແລະ ຄຸ້ມຄອງບໍລິຫານໂດຍທະນາຄານພັດທະນາອາຊີ (AASCTF). Ramboll ມີສ່ວນຮ່ວມເປັນຄູ່ຮ່ວມມືຫຼັກໃນການຈັດ ຕັ້ງປະຕິບັດ. ປະການທຳອິດ, ໃນຂັ້ນຕອນປະເມີນຕົວເມືອງ, ແຜນການ, ເອກະສານ ແລະ ຂໍ້ມູນທີ່ມີຢູ່ແມ່ນໄດ້ຮັບການວິເຄາະ ເພື່ອກຳນົດສິ່ງທີ່ເປັນຄວາມທ້າທາຍ ແລະ ກາລະໂອກາດໃນປະຈຸບັນຂອງນະຄອນ. ປະການທີສອງ, ໃນຂັ້ນຕອນສະຖານະການຕົວເມືອງ, ໄດ້ມີການກະກຽມການຄາດຄະເນປະຊາກອນ ແລະ ນັກທ່ອງທ່ຽວ, ພ້ອມດ້ວຍການຄາດຄະເນທີ່ດິນທີ່ຈຳເປັນສຳລັບທີ່ຢູ່ອາໃສ, ທີ່ພັກສຳລັບນັກທ່ອງທ່ຽວ ແລະ ສິ່ງອຳນວຍຄວາມສະດວກທີ່ສະໜັບສະໜູນອື່ນໆ ໂດຍພິຈາລະນາຈາກສະຖານະການທີ່ເປັນໄປໄດ້ໃນການເຕີບໃຫຍ່ຂະຫຍາຍຕົວຂອງນະຄອນ. ປະການທີສາມ, ຍຸດທະສາດແບບປະສົມປະສານໄດ້ຮັບການກຳນົດຂຶ້ນຈາກຂໍ້ມູນ ແລະ ການວິເຄາະທີ່ເກີດຂຶ້ນໃນຂັ້ນຕອນກ່ອນໜ້ານີ້, ລວມເຖິງ ການຈັດລຳດັບຄວາມສຳຄັນຂອງໂຊລູຊັນຕົວເມືອງອັດສະລິຍະ. ທຸກຂັ້ນຕອນຂອງຂະບວນການທີ່ກ່ຽວຂ້ອງກັບການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມເປັນວົງກວ້າງ ເພື່ອຮັບປະກັນຄວາມເປັນເຈົ້າຂອງໃນທ້ອງຖິ່ນ ແລະ ທັດສະນະຂອງຄວາມສະເໝີພາບຍິງຊາຍ, ປົກຜ່ອງທາງກາຍະພາບ ແລະ ການມີສ່ວນຮ່ວມທາງສັງຄົມ (GEDSI).

**ສະແກນລະຫັດ**
**ສຳລັບສະບັບດິຈິຕອນ**

https://bit.ly/464kX2N

## ຄວາມປາດຖະໜາທີ່ຈະກາຍເປັນເມືອງມໍລະດົກທີ່ໜ້າຢູ່ສຳລັບທຸກຄົນ

**ເສົາຄ້ຳດ້ານຍຸດທະສາດສາມເສົາຊີ້ນຳຍຸດທະສາດສະເພາະທີ່ຈະຊ່ວຍໃຫ້ນະຄອນຫຼວງພະບາງ** ຄຳນຶງເຖິງຄວາມມຸ້ງມາດປາດຖະໜາຂອງເມືອງມໍລະດົກທີ່ໜ້າຢູ່ຄື: (i) ຈຸດໝາຍປາຍທາງການທ່ອງທ່ຽວ ແລະ ມໍລະດົກແບບປະສົມປະສານ, (ii) ສະພາບແວດລ້ອມທີ່ມີຄວາມສະອາດ ແລະ ປອດໄພ, ແລະ (iii) ໝູ່ບ້ານທີ່ມີຄວາມຍືນຍົງ ແລະ ນະຄອນທີ່ໃຊ້ເວລາເດີນທາງພຽງແຕ່ 15 ນາທີ. ແຕ່ລະເສົາຄ້ຳຫຼັກແມ່ນປະກອບດ້ວຍ ວັດຖຸປະສົງດ້ານຍຸດທະສາດ ແລະ ໂຄງການຕົວເມືອງອັດສະລິຍະ ຊຶ່ງໄດ້ຮັບການສະໜັບສະໜູນໂດຍການວາງແຜນການດ້ານພື້ນທີ່ແບບປະສົມປະສານ, ກອບການບໍລິຫານຈັດການຂໍ້ມູນ ແລະ ການຄຸ້ມຄອງດູແລ ແລະ ການພິຈາລະນາແບບວຽກງານທີ່ປົກປ້ອງຂອງ GEDSI.

ຍຸດທະສາດຈັດລຳດັບຄວາມສຳຄັນ 50 ໂຄງການ, ໂດຍທີ່ມີ 6 ໂຄງການໄດ້ຮັບການຄັດເລືອກໃຫ້ເປັນໂຄງການທົດລອງ.   ໂຄງການທົດລອງການປັບປຸງສຸຂາພິບານ 2 ໂຄງການໄດ້ແກ່ ກັບດັກມົນລະພິດຂັ້ນຕົ້ນແບບອັດສະລິຍະ ແລະ ຖັງບຳບັດນ້ຳເສຍອັດສະລິຍະທີ່ໄດ້ລວມຢູ່ໃນໂຄງການລົງທຶນປັບປຸງສະພາບແວດລ້ອມໃນນະຄອນ ໂດຍການຮັບເງິນທຶນສະໜັບສະໜູນຈາກທະນາຄານ ADB ຊຶ່ງຄາດວ່າຈະເລີ່ມຕົ້ນໃນປີ 2024.

ຍຸດທະສາດ ຈະໄດ້ຮັບການຈັດຕັ້ງປະຕິບັດພາຍໃຕ້ການຄຸ້ມຄອງເບິ່ງແຍງຂອງຄະນະປະຈຳໂດຍການເປັນປະທານຂອງທ່ານເຈົ້າແຂວງ ແລະ ໄດ້ຮັບການສະໜັບສະໜູນຈາກຄະນະເຮັດວຽກຈາກຫຼາຍຂະແໜງການ, ແຕ່ລະພາກສ່ວນຈະເບິ່ງແຍງໜຶ່ງໃນສາມເສົາຄ້ຳຫຼັກດ້ານຍຸດທະສາດ.

### ການປະກອບສ່ວນສູ່ເປົ້າໝາຍການພັດທະນາແບບຍືນຍົງ

6 CLEAN WATER AND SANITAION

**ຮັບປະກັນຄວາມພ້ອມ ແລະ ການຈັດການນ້ຳ ແລະ ສຸຂາພິບານແບບຍືນຍົງສຳລັບທຸກຄົນ** – ເສົາຄ້ຳຫຼັກດ້ານສະພາບແວດລ້ອມທີ່ມີຄວາມສະອາດ ແລະ ປອດໄພຂອງຍຸດທະສາດ ມີເປົ້າໝາຍເພື່ອຈັດຫານ້ຳທີ່ສະອາດ ແລະ ສຸຂະອານາໄມທີ່ປອດໄພ ແລະ ລວມເຖິງ ກັບດັກມົນລະພິດຂັ້ນຕົ້ນແບບອັດສະລິຍະ ແລະ ຖັງບຳບັດນ້ຳເສຍອັດສະລິຍະແບບທົດລອງ.

9 INDUSTRY, INNOVATION AND INFRASTRUCTURE

**ສ້າງພື້ນຖານໂຄງລ່າງທີ່ມີຄວາມຍືດຍຸ່ນ, ສົ່ງເສີມການເປັນອຸດສາຫະກຳທີ່ຄອບຄຸມ ແລະ ຍືນຍົງ ແລະ ສົ່ງເສີມນະວັດຕະກຳ** – ຍຸດທະສາດຈະເພີ່ມທ່າແຮງໃຫ້ແກ່ບັນດາໜ່ວຍງານການຄຸ້ມຄອງເມືອງແລະ ແລະ ການທ່ອງທ່ຽວ ເພື່ອສົ່ງເສີມພື້ນຖານໂຄງລ່າງທີ່ຍືນຍົງ ແລະ ຍືດຍຸ່ນ,ໃນຂະນະດຽວກັນກໍ່ເປັນການຊຸກຍູ້ສົ່ງເສີມແນວທາງການຄຸ້ມຄອງເມືອງມໍລະດົກ ແລະ ການທ່ອງ ທ່ຽວທີ່ເປັນນະວັດຕະກຳໃໝ່.

10 REDUCED INEQUALITIES

**ຫຼຸດຜ່ອນຄວາມບໍ່ເທົ່າທຽມກັນທັງພາຍໃນ ແລະ ລະຫວ່າງຕ່າງປະເທດ** – ແມ່ນລວມໄວ້ໃນຍຸດທະສາດເພື່ອວ່າ ການພັດທະນາຈະເປັນປະໂຫຍດຕໍ່ກຸ່ມຜູ້ທີ່ດ້ອຍໂອກາດ.

11 SUSTAINABLE CITIES AND COMMUNITIES

**ເຮັດໃຫ້ບັນດາຕົວເມືອງຕ່າງໆ ແລະ ການຍົກຍ້າຍຖິ່ນຖານຂອງມະນຸດມີຄວາມຄອບຄຸມ, ປອດໄພ, ຢືດຢຸ່ນ ແລະ ຍືນຍົງ** – ຍຸດທະສາດຈະປົກປ້ອງມໍລະດົກທາງທຳມະຊາດທີ່ໄດ້ສ້າງຂຶ້ນ, ຈັບຕ້ອງບໍ່ໄດ້, ສົ່ງເສີມການຄົມມະນາຄົມຂົນສົ່ງ ແລະ ບໍລິການໃນຕົວເມືອງແບບຍືນຍົງ ແລະ ເສີມສ້າງຄວາມເຂັ້ມແຂງໃນການກະກຽມຄວາມພ້ອມເພື່ອຮັບມືກັບໄພພິບັດ ຊຶ່ງເປັນແນວທາງໃນການດຳເນີນການເຮັດໃຫ້ນະຄອນຫຼວງພະບາງກາຍເປັນນະຄອນທີ່ໜ້າຢູ່ສຳລັບທຸກຄົນ.

# ວິທີການດ້ານຍຸດທະສາດ




PSMV = ແຜນການອະນຸລັກ ແລະ ພັດທະນາ, SWOT = ຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ໄພຂົ່ມຂູ່.
ແຫຼ່ງຂໍ້ມູນ: Ramboll, 2023.

## ກ່ຽວກັບກອງທຶນອັດສະລິຍະອາຊຽນ-ອົດສະຕາລີ

ກອງທຶນອັດສະລິຍະອາຊຽນ-ອົດສະຕາລີ (AASCTF) ໃຫ້ຄວາມຊ່ວຍເຫຼືອຕົວເມືອງຕ່າງໆໃນ ASEAN ໃນການເພີ່ມປະສິດທິພາບໃຫ້ແກ່ລະບົບການວາງແຜນການ, ການໃຫ້ບໍລິການ ແລະ ການການເງິນ ໂດຍການພັດທະນາ ແລະ ທົດສອບໂຊລູຊັນ ແລະ ລະບົບຕົວເມືອງດີຈີຕອນທີ່ມີຄວາມເາະສົມ. ດ້ວຍການເຮັດວຽກຮ່ວມກັບຕົວເມືອງຕ່າງໆ, AASCTF ອຳນວຍຄວາມສະດວກໃນການຫັນປ່ຽນໃຫ້ກາຍເປັນຕົວເມືອງທີ່ໜ້າຢູ່, ມີຄວາມຍືດຍຸ່ນ ແລະ ຄອບຄຸມຫຼາຍຂຶ້ນ, ໃນຂະນະດຽວກັນ ໃນຂັ້ນຕອນການກຳນົດແນວທາງການປະຕິບັດທີ່ດີທີ່ສຸດ ແລະ ຕໍ່ໄປທີ່ສາມາດປັບຂະໜາດໄດ້ເພື່ອປະຕິບັດຊ້ຳໃນຕົວເມືອງຕ່າງໆໃນຂົງເຂດອາຊີ ແລະ ປາຊີຟິກ. ກອງທຶນຊ່ວຍເຫຼືອແມ່ນໄດ້ຮັບການສະໜັບສະໜູນເງິນທຶນຈາກລັດຖະບານປະເທດອົດສະຕາລີ ໂດຍຜ່ານທາງ ກະຊວງການຕ່າງປະເທດ ແລະ ການຄ້າ (DFAT), ຊຶ່ງໄດ້ຮັບການຄຸ້ມຄອງໂດຍ ທະນາຄານ ພັດທະນາອາຊີ (ADB) ແລະ ຈັດຕັ້ງປະຕິບັດໂດຍ Ramboll.

AASCTF   @aasctf   @AASCTF   @aasctf